Media Release

Cambodia • Lao PDR • Thailand • Viet Nam
For sustainable development

เພື່ອການເຜີຍແຜ່ (ສະບັບແປຢ່າງບໍ່ເປັນທາງການ)

# ຍີ່ປຸ່ນ ໃຫ້ການຊ່ວຍເຫລືອ 3.9 ລ້ານ ໂດລາສະຫະລັດ ແກ່ ຄມສ ເພື່ອຮັບມືກັບບັນຫາ ໄພນໍ້າຖ້ວມ ແລະ ໄພແຫ້ງແລ້ງ

**ນະຄອນຫລວງວຽງຈັນ, ສປປ ລາວ, ວັນທີ 13 ມີນາ 2020 -** ລັດຖະບານຍີ່ປຸ່ນໄດ້ໃຫ້ທຶນຊ່ວຍເຫລືອລ້າ ຈຳນວນ 412 ລ້ານເຢັນ ຫຼືປະມານ 3.9 ລ້ານ ໂດລາສະຫະລັດ ແກ່ອົງການແມ່ນໍ້າຂອງສາກົນ (ຄມສ) ເພື່ອພັດທະນາ ການຕິດຕາມ ແລະ ພະຍາກອນ ໄພແຫ້ງແລ້ງ ແລະ ໄພນໍ້າຖ້ວມ ຂອງອົງການດັ່ງກ່າວໃຫ້ກ້າວຫນ້າຍິ່ງຂຶ້ນ.

ທຶນຊ່ວຍເຫລືອດັ່ງກ່າວມີໄລຍະເວລາສີ່ປີ ເລີ່ມແຕ່ປີ 2020 ເຖິງ 2023 ເຊິ່ງມີຈຸດປະສົງເພື່ອພັດທະນາ ສູນຄຸ້ມຄອງ ໄພນໍ້າຖ້ວມ ແລະ ໄພແຫ້ງແລ້ງ (RFDMC) ຢູ່ນະຄອນຫລວງພະນົມເປັນ ໃຫ້ກາຍເປັນສູນທີ່ດີເລີດ ໃນການພະຍາກອນ ໄພແຫ້ງແລ້ງ ແລະ ໄພນໍ້າຖ້ວມ ພ້ອມທັງແຈ້ງເຕືອນລວ່ງຫນ້າໃຫ້ແກ່ບັນດາປະເທດລຸ່ມແມ່ນໍ້າຂອງ ກໍຄື ກຳປູເຈຍ, ສປປ ລາວ, ໄທ ແລະ ຫວຽດນາມ ໃຫ້ໄດ້ຢ່າງໄວວາ ແລະ ມີປະສິດທິພາບດີຂຶ້ນກ່ອນເກົ່າ.

ວຽກງານຫລັກທີ່ທຶນດັ່ງກ່າວຈະຊ່ວຍເຫລືອ ແມ່ນການປັບປຸງຂໍ້ມູນສາທາລະນະ ກ່ຽວກັບ ໄພນໍ້າຖ້ວມ ແລະ ໄພແຫ້ງແລ້ງ ດ້ວຍການໃຊ້ເຕັກໂນໂລຢີທີ່ກ້າວຫນ້າ, ເພື່ອໃຫ້ ຊຸມຊົນ ແລະ ລັດຖະບານທ້ອງຖິ່ນ ໄດ້ຮັບຮູ້ຂ່າວສານຢ່າງຖວ່ງທັນ ແລະ ຫລຸດຜ່ອນຄວາມເສຍຫາຍໃນເວລາປະສົບໄພພິບັດ. ນອກຈາກນີ້ ການຊວ່ຍເຫລືອໃນຄັ້ງນີ້ ຈະຊວ່ຍ ໃຫ້ມີການລວມຕົວຂອງລະບົບ ການຈັດການໄພນໍ້າຖ້ວມ ແລະ ໄພແຫ້ງແລ້ງ ເຊິ່ງຈະເຮັດໃຫ້ການພະຍາກອນລວ່ງຫນ້າ ກວມເອົາເວລາຍາວນານຂຶ້ນ ແລະ ມີຄວາມຊັດເຈນຍິ່ງຂຶ້ນ.

"ທຶນຊ່ວຍເຫລືອໃນຄັ້ງນີ້ຈະເຮັດໃຫ້ ຄມສ ປັບປຸງຄວາມອາດສາມາດໃນການພະຍາກອນ ໄພນໍ້າຖ້ວມ ແລະ ໄພແຫ້ງແລ້ງ ໃນຕໍ່ຫນ້າ ໂດຍມີຈຸດປະສົງເພື່ອສືບຕໍ່ສະຫນັບສະຫນຸນ ບັນດາປະເທດສະມາຊິກ ໃນການຮັບມືກັບຄວາມສ່ຽງໄພນໍ້າຖ້ວມ ແລະ ໄພແຫ້ງແລ້ງ ຕໍ່ຊຸມຊົນທີ່ມີຄວາມສ່ຽງ ໄດ້ຢ່າງມີປະສິດທິຜົນ", ກ່າວໂດຍ ດຣ ອັນ ພິສ ຮັດດະ ຫົວຫນ້າກອງເລຂາ ຄມສ ໃນພິທີເຊັນສັນຍາທີ່ຖືກຈັດຂຶ້ນຢູ່ທີ່ສຳນັກງານໃຫຍ່ກອງເລຂາ ຄມສ ທີ່ນະຄອນຫລວງ
ວຽງຈັນ.

ລັດຖະບານຍີ່ປຸ່ນເປັນຫນຶ່ງໃນຄູ່ຮ່ວມພັດທະນາອັນຍາວນານຂອງ ຄມສ. ຕັ້ງແຕ່ປີ 2001, ຍີ່ປຸ່ນໄດ້ໃຫ້ທຶນການຊ່ວຍເຫລືອກວ່າ 18 ລ້ານ ໂດລາສະຫະລັດ ເພື່ອສະຫນັບສະຫນຸນຫລາຍໂຄງການ ເຊິ່ງລວມມີ ການຈັດການໄພນໍ້າຖ້ວມ ແລະ ໄພແຫ້ງແລ້ງ, ຊົນລະປະທານ, ການປ່ຽນແປງດິນຟ້າອາກາດ ແລະ ການຈັດການສິ່ງແວດລ້ອມ.

ໃນປີ 2004 ລັດຖະບານຍີ່ປຸ່ນ ໄດ້ໃຫ້ການຊວ່ຍເຫລືອ ຄມສ ເພື່ອກໍ່ສ້າງສູນຄຸ້ມຄອງ ແລະ ບັນເທົາ ໄພນໍ້າຖ້ວມ ເຊິ່ງເປັນສູນເກົ່າກ່ອນປ່ຽນມາເປັນ RFDMC ໃນປັດຈຸບັນ, ພ້ອມທັງ ສິ່ງອຳນວຍຄວາມສະດວກ ແລະ ເຕັກໂນໂລຢີ ທີ່ຈຳເປັນແກ່ການພະຍາກອນໄພນໍ້າຖ້ວມປະຈຳວັນໃນພາກພື້ນ.

ຍີ່ປຸ່ນເຊື່ອໝັ້ນວ່າ ດ້ວຍການສະໜັບສະໜູນທາງດ້ານການເງິນດັ່ງກ່າວນີ້ ຈະຖືກນຳໃຊ້ເຂົ້າໃນວຽກງານ ການເສີມສ້າງຄວາມເຂັ້ມແຂງໃຫ້ ຄມສ ໃນການປະຕິບັດງານ ເພື່ອຕອບໂຕ້ກັບໄພແຫ້ງແລ້ງ ແລະ ນ້ຳຖ້ວມ ໃນອ່າງຮັບນ້ຳຂອງ ເຊິ່ງເປັນຂົງເຂດທີ່ໄດ້ປະສົບກັບໄພດັ່ງກ່າວ ຢູ່ເລື້ອຍໆ.

"ການຊ່ວຍເຫລືອໃນຄັ້ງນີ້ ສະແດງເຖິງ ຄວາມໄວ້ເນື້ອເຊື່ອໃຈ ແລະ ຄວາມໝັ້ນໃຈ ທີ່ຍີ່ປຸ່ນມີຕໍ່ ວຽກງານຂອງ ຄມສ ໃນການຫລຸດຜ່ອນໄພທຳມະຊາດ ແລະ ປັບປຸງການຈັດການຊັບພະຍາກອນນ້ຳໃນອ່າງຮັບນ້ຳຂອງ" ກ່າວໂດຍ ພະນະທ່ານ ທາເກວາກະ ເຄໂຊ, ເອກອັກຄະຣາຊະທູດຍີ່ປຸ່ນປະຈຳ ສປປ ລາວ ເນື່ອງໃນພິທີເຊັນສັນຍາ ວັນສຸກ 13 ມີນາ.

**ໝາຍເຫດ:**

ຄມສ ແມ່ນ ອົງການຈັດຕັ້ງ ລະຫວ່າງລັດຖະບານ ເພື່ອການປຶກສາຫາລື ແລະ ການຮ່ວມມື ໃນອ່າງແມ່ນ້ຳຂອງ ຕອນລຸ່ມ. ສ້າງຕັ້ງຂຶ້ນໃນປີ 1995 ອີງຕາມສັນຍາແມ່ນ້ຳຂອງ ລະຫວ່າງ ຣາຊະອານາຈັກກຳປູເຈຍ, ສປປ ລາວ, ຣາຊະອານາຈັກໄທ, ແລະ ສສ ຫວຽດນາມ. ອົງການດັ່ງກ່າວເປັນກົນໄກລະດັບພາກພື້ນ ເພື່ອ ການຮ່ວມມື ກ່ຽວກັບນ້ຳ ແລະ ທັງເປັນ ສູນກາງຄວາມຮູ້ ການຄຸ້ມຄອງຊັບພະຍາກອນນ້ຳເພື່ອການພັດທະນາ ທີ່ຍືນຍົງ ຂອງ ພາກພື້ນ.

- **ຈົບ** -

**ຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່** :

ທ່ານ ໂສພຽກ ແມ
ເຈົ້າໜ້າທີ່ ການສື່ສານ
ກອງເລຂາ ຄະນະກຳມາທິການແມ່ນ້ຳຂອງສາກົນ
ອີເມວ: sopheak@mrcmekong.org
ໂທລະສັບ: +856-21-263263, ext. 4012